HER et al. (2024). Souphanouvong University Journal of Multidisciplinary Research and Development.
ISSN 2521-0653. Volume 10. Issue 2. Apr - Jun. 2024. Page 133 - 144

# ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງດັດຊະນີຄວາມທຸກຍາກຂອງຄົວເຮືອນເມືອງໂພນໄຊ ແຂວງຫຼວງພະບາງ

**ບຸນໄທ ເຮີ*, ບຸນທະວີ ສີພັນທອງ, ສຸດຖາວອນ ສີອຸດົມພັນ**

*ພາກວິຊາ ເສດຖະສາດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ, ສປປ ລາວ*

***ຕິດຕໍ່ພົວພັນ:** ບຸນໄທ ເຮີ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລ ສຸພານຸວົງ ເບີໂທ: +856 20 55466568, ອີເມວ: herbounthai @gmail.com*

***ຂໍ້ມູນບົດຄວາມ:***

*ການສົ່ງບົດ: 04 ມີນາ 2024*

*ການປັບປຸງ: 06 ມິຖຸນາ 2024*

*ການຕອບຮັບ: 12 ມິຖຸນາ 2024*

**ບົດຄັດຫຍໍ້**

ການຄົ້ນຄວ້າຄັ້ງນີ້ ມີຈຸດປະສົງເພື່ອສຶກສາ ສະພາບຄວາມທຸກຍາກຂອງຄົວເຮືອນ ເມືອງໂພນໄຊ ແຂວງຫຼວງພະບາງ ແລະ ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງດັດຊະຄວາມທຸກຍາກຂອງຄົວເຮືອນ ເມືອງໂພນໄຊ ແຂວງຫຼວງພະບາງ ການເກັບກຳຂໍ້ມູນໄດ້ນຳໃຊ້ແບບສອບຖາມລົງເກັບກຳຂໍ້ມູນນຳກຸ່ມຕົວຢ່າງ ຈຳນວນ 320 ຄົວເຮືອນ ການວິເຄາະຂໍ້ມູນແມ່ນນຳໃຊ້ສູດແບບຈຳລອງດັດຊະນີຄວາມທຸກຍາກຂອງຄົວເຮືອນ ແລະ ໃຊ້ໂປຼແກມວິເຄາະຂໍ້ມູນທາງສະຖິຕິ (SPSS Version 27) ເພື່ອຊອກຫາຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ.

ຜົນການຄົ້ນຄວ້າຄັ້ງນີ້ ພົບວ່າ: ເນື່ອງມາຈາກຈຳນວນສະມາຊິກ ແລະ ຜູ້ເພິ່ງພາທີ່ເປັນເດັກນ້ອຍ, ຜູ້ສູງອາຍຸ ແລະ ຄົນພິການໃນຄົວເຮືອນຈຳນວນຫຼາຍ; ໂດຍສ່ວນໃຫຍ່ແມ່ນປະກອບອາຊີບໃນການເຮັດໄຮ່ ແລະ ການເຮັດສວນ ສົ່ງຜົນໃຫ້ແຕ່ລະຄົວເຮືອນຍັງມີລາຍຮັບສະເລ່ຍ/ຄົວເຮືອນ/ປີ ແລະ ລາຍຮັບໂດຍສະເລ່ຍ/ຄົນ/ປີ ຂ້ອນຂ້າງຕໍ່າຄື: 20,418,118 ກີບ ແລະ 3,708,861 ກີບ ຕາມລຳດັບ ເຊິ່ງຍັງບໍ່ສາມາດບັນລຸຕາມເງື່ອນໄຂ ແລະ ມາດຕະຖານຂອງການພົ້ນທຸກໄດ້. ພ້ອມນັ້ນຍັງມີປະຊາຊົນຈຳນວນໜຶ່ງ ກໍ່ຍັງມີການກໍ່ໜີ້ສິນເນື່ອງມາຈາກກູ້ຢືມມາເພື່ອໃຊ້ໃນການຜະ ລິດກະສິກຳ ແລະ ເພື່ອໃຊ້ໃນເວລາເຈັບປ່ວຍ. ການເດີນທາງເຂົ້າອອກແມ່ນມີພຽງຊ່ອງທາງດຽວຄື: ເສັ້ນທາງຄົມມະນາຄົມທາງບົກ, ເສັ້ນທາງເຂົ້າເຖິງທີ່ຢູ່ອາໄສແມ່ນມີຄວາມລຳບາກ ແລະ ນຳໃຊ້ໄດ້ບາງລະດູການເທົ່ານັ້ນ ແລະ ບໍ່ມີເສັ້ນທາງເຂົ້າເຖິງສະຖານທີ່ທຳການຜະລິດ; ມີປະຊາຊົນໂດຍສ່ວນຫຼາຍຍັງບໍ່ສາມາດເຂົ້າເຖິງລະບົບຕາຂ່າຍໄຟຟ້າ ແລະ ລະບົບນໍ້າປະປາ; ຫຼາຍຄົວເຮືອນຍັງບໍ່ມີເຮືອນຢູ່ແບບຖາວອນ. ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງດັດຊະນີຄວາມທຸກຍາກພາກຄົວເຮືອນພົບວ່າ: ຈຳນວນສະມາຊິກໃນຄົວເຮືອນ ມີການພົວພັນໄປໃນທິດທາງດຽວກັນ ແລະ ມີຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງປະຊາຊົນເພີ່ມຂຶ້ນ; ສ່ວນປັດໄຈລາຍຮັບຂອງຄົວເຮືອນ, ປັດໄຈດ້ານຈຳນວນສະມາຊິກທີ່ສາມາດສ້າງລາຍໄດ້ໃນຄອບຄົວ, ຊັບສິນຂອງຄົວເຮືອນ, ສະພາບແວດລ້ອມຂອງຄົວເຮືອນ (ເສັ້ນທາງຄົມມະນາຄົມ, ໄຟຟ້າ, ການຊົມໃຊ້ນໍ້າ, ສະພາບທີ່ຢູ່ອາໄສ) ແລະ ປັດໄຈດ້ານອັດຕາສ່ວນການບັນລຸດ້ານການສຶກສາຂັ້ນພື້ນຖານຂອງຄົວເຮືອນ ມີການພົວພັນໄປໃນທິດທາງກົງກັນຂ້າມກັນ ແລະ ມີຜົນເຮັດໃຫ້ ດັດຊະນີຄວາມທຸກຍາກຂອງປະຊາຊົນລຸດລົງ ດ້ວຍລະດັບຄວາມເຊື່ອໝັ້ນ 90% ຂຶ້ນໄປ.

**ຄຳສັບສຳຄັນ:** ຄວາມທຸກຍາກ, ດັດຊະນີຄວາມທຸກຍາກ, ປັດໄຈທີ່ສົ່ງຜົນ

# Factors affecting the change in the poverty index of households in Phonxay District, Luang Prabang Province

**Bounthai HER***, **Bounthavy SIPHANTHONG, Soutthavone SIOUDOMPHAN**

*Department of Economics Faculty of Economics and Tourism Souphanouvong University, Lao PDR*

***Correspondence:** Bounthai HER, Faculty of Economics and Tourism, Souphanouvong University Tel: +856 20 55466568, Email: Herbounthai @gmail.com*

***Article Info:***
*Submitted: Mar 04, 2024*
*Revised: June 06, 2024*
*Accepted: June 12, 2024*

**ABSTRACT**

This research aims to study the state of poverty of households in Phonxay District, LuangPrabang Province, and the factors affecting the change in the poverty index of households in Phonxay District, LuangPrabang Province. The data collection uses a questionnaire to collect data from a sample group of 320 households. The data analysis is done using the household poverty index simulation formula and the statistical data analysis program (SPSS Version 27) to find frequency values, percentage values, average values, and standard deviation values.

The results found that, due to the number of members and dependents who are children, the elderly, and the disabled in many households, most of them are engaged in farming and gardening, resulting in each household having an average income/household/year and an average income/person/year that is quite low: 20,418,118 kip and 3,708,861 kip, respectively, which still cannot meet the conditions and standards of all. At the same time, there are also some people who are still in debt due to borrowing to use in agricultural production and to use in case of illness. There is only one way to travel in and out, namely: land transportation; access roads to residences are difficult and can only be used in certain seasons; and there is no access road to production sites. Most people still do not have access to the electricity grid and water supply systems. Many households still do not have a permanent home. The factors affecting the change in the household poverty index are found to be: the number of members in the household has a relationship in the same direction and has the effect of increasing the poverty index of the people; As for the household income factor, the number of members who can generate income in the family, the household assets, the household environment (roads, electricity, water consumption, housing conditions), and the ratio factor of the household's basic educational attainment have a relationship in the opposite direction and have the effect of reducing the poverty index of the people with a confidence level of 90% .

**Keyword:** Poverty, Poverty index, Factors affecting

## 1. ພາກສະເໜີ

ຄວາມທຸກຍາກແມ່ນ ບັນຫາທີ່ທຸກປະເທດໃນທົ່ວໂລກໃຫ້ຄວາມສຳຄັນ ເນື່ອງຈາກວ່າ ຄວາມທຸກຍາກມີໂອກາດທີ່ຈະເຮັດໃຫ້ເກີດບັນຫາອື່ນໆ ຕາມມາບໍ່ວ່າຈະເປັນບັນຫາຄອບຄົວ, ບັນຫາຢາເສບຕິດ, ບັນຫາອາດຊະຍາກຳ, ບັນຫາຄວາມບໍ່ສະເໝີພາບພ້ອມທັງບັນຫາຄຸນນະພາບປະຊາກອນ ແລະ ການພັດທະນາປະເທດຊາດ. World Bank (2009) ດັ່ງນັ້ນ, ພັກ-ລັດ ຈຶ່ງໄດ້ໃຫ້ຄວາມສຳຄັນຫຼາຍຕໍ່ກັບການພັດທະນາຊັບພະຍາກອນມະນຸດໂດຍສຸມໃສ່ງົບປະມານເຂົ້າໃນວຽກງານການສຶກສາເພື່ອພັດທະນາພື້ນຖານໂຄງລ້າງການສຶກສາ ແລະ ປັບປຸງລະບົບການຮຽນການສອນທຸກຂັ້ນ, ການພັດທະນາຫຼັກສູດການຮຽນການສອນເພື່ອໃຫ້ສອດຄອງກັບຄວາມຕ້ອງການຂອງຕະຫຼາດແຮງງານໂດຍຫັນເອົາໂຄງການລົງໄປຈັດຕັ້ງປະຕິບັດຢູ່ທ້ອງຖິ່ນໃຫ້ຫຼາຍຂຶ້ນເຊັ່ນ: ໂຄງການພັດທະນາຄຸນນະພາບການສຶກສາ, ໂຄງການເລັ່ງລັດການສຶກສາ, ໂຄງການພັດທະນາການສຶກສາຂັ້ນພື້ນຖານ, ໂຄງການເຕັກໂນໂລຊີ ແລະ ການສື່ສານ ເພື່ອປັບປຸງການສຶກສາໃນຊັ້ນມັດທະຍົມໃຫ້ດີຂຶ້ນໂດຍມີການກໍ່ສ້າງໂຮງຮຽນມັດທະຍົມຕົວແບບໃນແຕ່ລະແຂວງ ແລະ ໄດ້ມີການເຊື່ອມໂຍງເຂົ້າກັບສູນ ICT ຂອງກະຊວງສຶກສາທິການ ແລະ ກິລາ ແລະ ອື່ນໆ ນອກຈາກນີ້ຍັງໄດ້ຈັດສັນເງິນບໍລິຫານໂຮງຮຽນໃຫ້ແຕ່ລະໂຮງຮຽນໃນທົ່ວປະເທດເຮັດໃຫ້ການສຶກສາຂອງ ສປປ ລາວ ນັບມື້ນັບດີຂຶ້ນທັງປະລິມານ ແລະ ຄຸນນະພາບ (Sidakham, 2020).

ການພັດທະນາປະເທດຊາດເປັນສິ່ງທີ່ສຳຄັນຂອງທຸກໆປະເທດ ແລະ ສິ່ງທີ່ສະແດງໃຫ້ເຫັນວ່າຄວາມເປັນຢູ່ຂອງປະຊາຊົນໃນປະເທດໂດຍລວມໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນແຕ່ສິ່ງທີ່ຈະສະແດງໃຫ້ເຫັນວ່າປະເທດນັ້ນມີການພັດທະນາຫຼາຍໜ້ອຍເທົ່າໃດບໍ່ໄດ້ມີພຽງໂຕເລກທາງເສດຖະກິດເທົ່ານັ້ນທີ່ຈະເປັນຕົວຊີ້ວັດຍັງມີຫຼາຍດັດຊະນີວັດແທກອີກເຊັ່ນ: ອັດ ຕາການຫວ່າງງານ, ຄວາມບໍ່ເທົ່າທຽມກັນໃນການກະຈາຍລາຍໄດ້, ຄວາມຈະເລີນໃນທ້ອງຖິ່ນເປັນຕົ້ນແຕ່ກໍ່ບໍ່ແມ່ນທຸກຄົນທີ່ມີຊີວິດການເປັນຢູ່ຈະດີຂຶ້ນຍັງມີພາກສ່ວນໜຶ່ງທີ່ບໍ່ໄດ້ຮັບຜົນປະໂຫຍດຈາກການເຮັດການຄ້າເສີຍເຊິ່ງຜົນປະໂຫຍດທີ່ເກີດຂຶ້ນຈາກການຄ້າຍັງບໍ່ໄດ້ກະຈາຍໄປສູ່ພາກສ່ວນອື່ນໃນສັງຄົມຕາມກົນໄກປົກກະຕິໂດຍສະເພາະແມ່ນກຸ່ມຜູ້ທີ່ມີລາຍໄດ້ໜ້ອຍ ຫຼື ຜູ້ທີ່ດ້ອຍໂອກາດໃນສັງຄົມ ຫຼື ເອີ້ນວ່າ: ຄົນທຸກຍາກໃນພາບລວມຂອງເສດຖະກິດຂອງລາວລາຍຮັບສະເລ່ຍຕໍ່ຫົວຄົນ (GDP) ທີ່ເພີ່ມຂຶ້ນອາດຈະໝາຍເຖິງການຈະເລີນເຕີບໂຕທາງເສດຖະກິດທີ່ດີຂຶ້ນແຕ່ບໍ່ໄດ້ໝາຍຄວາມວ່າປະຊາຊົນທຸກຄົນພາຍໃນປະເທດຈະມີຊີວິດການເປັນຢູ່ທີດີຂຶ້ນ, ຄຸນນະພາບຊີວິດທີ່ດີຂຶ້ນ (Krainuch, 2008).

ສປປ ລາວ ມີບັນຫາຄວາມທຸກຍາກທີ່ສະສົມມາເປັນເວລາດົນນານຜົນກະທົບຕໍ່ສະຫວັດດີການຂອງບຸກຄົນບໍ່ສາ ມາດພັດທະນາຄຸນນະພາບຊີວິດໄດ້ຕາມທີ່ຄວນເຮັດໃຫ້ຂາດໂອກາດໃນດ້ານຕ່າງໆ ພ້ອມທັງຂາດການແຈກຢາຍລາຍຮັບທີ່ ເໝາະສົມ, ຄວາມທຸກຍາກແມ່ນຜົນມາຈາກຫຼາຍປັດໄຈບໍ່ພຽງແຕ່ຜູ້ທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ ຫຼື ລາຍຮັບເພື່ອປະຕິບັດໜ້າທີ່ຂອງຕົນ, ການດຳລົງຊີວິດເທົ່ານັ້ນຍັງກວມເອົາຄວາມທຸກຍາກດ້ານໂຄງສ້າງທີ່ເກີດຂຶ້ນຈາກການຂາດເຂີນໃນຫຼາຍຂົງເຂດທີ່ເຮັດໃຫ້ຂາດຄວາມສາມາດໃນການດຳລົງຊີວິດ, ລວມທັງການຂາດການສຶກສາ ຫຼື ການໄດ້ຮັບການສຶກສາໜ້ອຍ ຫຼື ຕໍ່າກວ່າຄົນທຳມະດາ, ຂາດຊັບພະຍາກອນ, ຂາດທີ່ດິນປູກຝັງ ຫຼື ມີທີ່ດິນທີ່ປະສົບກັບບັນຫາດ້ານຊັບພະຍາກອນ, ຂາດການລົງທຶນ ຫຼື ມີເນື້ອທີ່ດິນປູກຝັງໜ້ອຍ, ຂາດການສ້າງກຸ່ມ ແລະ ມີສ່ວນຮ່ວມທາງດ້ານການເມືອງ, ຂາດຂໍ້ມູນຂ່າວ ສານ ແລະ ຄວາມຮູ້ທາງດ້ານທຸລະກິດອາຊີບລວມທັງມີພາລະທີ່ເພິ່ງພາອາໄສສູງ ແລະ ບໍ່ສາມາດເຂົ້າເຖິງການບໍລິການຂອງລັດຖະບານ ແລະ ການຊ່ວຍເຫຼືອດ້ານຕ່າງໆເຊິ່ງເຮັດໃຫ້ເກີດຄວາມບໍ່ສະເໝີພາບທາງດ້ານເສດຖະກິດ - ສັງຄົມ (Saranjit, 2015).

ເມືອງໂພນໄຊເປັນເມືອງໜຶ່ງທີ່ຢູ່ໃນແຂວງຫຼວງພະບາງ ແລະ ເປັນໜຶ່ງໃນ 4 ເມືອງທີ່ທຸກຍາກຂອງແຂວງຫຼວງ

ພະບາງ, ຕັ້ງຢູ່ທິດຕາເວັນອອກສ່ຽງເໜືອຂອງແຂວງຫຼວງພະບາງ, ຫ່າງຈາກເທດສະບານແຂວງຫຼວງພະບາງປະມານ 64 ກິໂລ ແມັດ, ທິດເໜືອຕິດກັບເມືອງປາກແຊງ, ທິດໃຕ້ຕິດກັບເມືອງພູຄູນ, ເມືອງຊຽງເງິນ ແຂວງຫຼວງພະບາງ, ທິດຕາເວັນອອກຕິດກັບເມືອງຮ້ຽມແຂວງຫົວພັນ ແລະ ເມືອງພູກູດແຂວງຊຽງຂວາງ, ມີເນື້ອທີ່ທັງໝົດ 241.150,83 ເຮັກຕາ, ເນື້ອທີ່ສ່ວນໃຫ່ຍເປັນພູສູງ ແລະ ພູດອຍກວມປະມານ 79.06 % ຂອງເນື້ອທີ່ທັງໝົດ, ລະດັບຄວາມໜາແໜ້ນຂອງພົນລະເມືອງ 8.29 ເຮັກຕາ/ຄົນ, ລະດັບຄວາມສູງຈາກໜ້ານໍ້າທະເລປະມານ 500 ແມັດຫາ 1.500 ແມັດ, ມີ 9 ກຸ່ມບ້ານ ແລະ 1 ບ້ານໃຫຍ່, ໃນນັ້ນມີ 57 ບ້ານ, ໃນນັ້ນ, ມີຄົວເຮືອນທັງໝົດ 5,827 ຄົວເຮືອນ, ມີພົນລະເມືອງທັງໝົດ 36,035 ຄົນ, ຍິງ 17,697 ຄົນ, ໂດຍອີງໃສ່ຈຸດພິເສດທາງດ້ານທີ່ຕັ້ງ, ພູມສັນ ຖານເມືອງໂພນໄຊຍັງເປັນເຂດທີ່ມີຄວາມຫຍຸ້ງຍາກໃນການພັດທະນາ, ອັດຕາຄວາມທຸກຍາກຂອງປະຊາຊົນຍັງກວມອັດຕາສ່ວນຫຼາຍ, ການຜະລິດອຸດສາຫະກຳ ແລະ ການບໍລິການຍັງຢູ່ໃນຂັ້ນເລີ່ມຕົ້ນ, ການພັດທະນາທີ່ຢູ່ອາໄສຍັງຫຼ້າຊ້າ, ລະດັບການຜະລິດ, ປະລິມານສິນຄ້າ ແລະ ກຳລັງການຊື້ - ຂາຍຍັງມີໜ້ອຍເຊິ່ງເປັນສິ່ງທ່ວງດຶງການພັດທະນາ, ການພັດທະນາເຕັກນິກ ແລະ ລະດັບການສຶກສາຍັງມີຄວາມຈຳກັດ ແລະ ບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາໃນໄລຍະໃໝ່, ອີກດ້ານໜຶ່ງແມ່ນຍັງຂາດທຶນຮອນໃນການພັດທະ ນາເປັນເມືອງທີ່ຂາດດູນງົບປະມານ, ຈຶ່ງເປັນສາເຫດເຮັດໃຫ້ທຶນຮອນໃນການພັດທະນາຂາດແຄນ, ຍັງອາໄສການຊ່ວຍເຫຼືອຈາກພາຍນອກເປັນສ່ວນໃຫຍ່. ການລົງທຶນຂອງພາກເອກະຊົນເພື່ອເປັນແຫຼ່ງທຶນໃນການພັກດັນການພັດທະນາເສດຖະກິດ - ສັງຄົມ ແລະ ການຜະລິດສິນຄ້າຍັງມີໜ້ອຍ, ການພັດທະນາຊັບພະຍາກອນມະນຸດຍັງບໍ່ທັນສົມຄູ່ກັບການຂະຫຍາຍຕົວຂອງເສດຖະກິດ (Administration office of Phonxay District, 2020). ດັ່ງນັ້ນ, ຜູ້ສຶກສາຈຶ່ງມີຄວາມສົນໃຈ ສຶກສາສະພາບຄວາມທຸກຍາກຂອງຄົວເຮືອນ ແລະ ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງດັດຊະນີຄວາມທຸກຍາກຂອງຄົວເຮືອນ ເມືອງໂພນໄຊ ແຂວງຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

### 2.1 ເຄື່ອງມືທີ່ໃຊ້ໃນການທີ່ໃຊ້ໃນການວິໄຈ

ການສຶກສາໃນຄັ້ງນີ້ ເປັນການສຶກສາໃນລັກສະນະການສຳຫຼວດ (Survey research) ໂດຍໃຊ້ແບບສອບຖາມ (Questionnaires) ເຊິ່ງແບບສອບຖາມປະກອບມີສີ່ພາກສ່ວນຄື: ຂໍ້ມູນທົ່ວໄປຂອງຫົວໜ້າຄົວເຮືອນ, ຂໍ້ມູນກ່ຽວກັບສະພາບຄວາມທຸກຍາກຂອງຄົວເຮືອນເຊັ່ນ: ການດຳລົງຊີວິດ, ເສດຖະກິດ, ສັງຄົມ, ການສຶກສາ, ສາທາລະນະສຸກ ແລະ ການຄົມມະນາຄົມ ໃນນັ້ນແບບສອບຖາມມີທັງປາຍປິດ ແລະ ປາຍເປີດ ເພື່ອໃຫ້ຜູ້ຕອບແບບສອບຖາມສາມາດປະກອບຄວາມຄິດເຫັນເພີ່ມເຕີມໄດ້.

### 2.2 ກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້, ຜູ້ສຶກສາໄດ້ກຳນົດເອົາສະເພາະບ້ານທີ່ມີຈຳນວນຄົວເຮືອນທີ່ທຸກຍາກຕັ້ງແຕ່ 90% ຂຶ້ນໄປ, ເຊິ່ງມີທັງໝົດຈຳນວນ 10 ບ້ານ, ທີ່ມີຄົວເຮືອນທີ່ທຸກຍາກຈຳນວນ 802 ຄົວເຮືອນ, ເຊິ່ງຄິດໄລ່ໃນຂະໜາດຕົວຢ່າງທີ່ເໝາະສົມກັບການຄິດໄລ່ຈາກສູດຂອງ Taro Yamane ໄດ້ເທົ່າກັບ 267 ຄົວເຮືອນ, ແຕ່ເພື່ອຄວາມຊັດເຈນຂອງກຸ່ມຕົວຢ່າງ ແລະ ເພື່ອກຸ່ມຕົວຢ່າງທີ່ເກັບກຳບໍ່ສົມບູນຜູ້ສຶກສາຈຶ່ງໄດ້ກຳນົດຈຳນວນກຸ່ມຕົວຢ່າງສຳຮອງໄວ້ 20% ຂອງຈຳນວນຂະໜາດກຸ່ມຕົວຢ່າງທີ່ຄິດໄລ່ໄວ້ດັ່ງນັ້ນ ຈຳນວນກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ທັງໝົດຈຶ່ງເທົ່າກັບ 320 ຄົວເຮືອນ.

### 2.3 ການເກັບລວບລວມຂໍ້ມູນ

ການສຶກສາຄັ້ງນີ້ ຂໍ້ມູນທັງໝົດແມ່ນມີລັກສະນະເປັນຂໍ້ມູນປະຖົມພູມ (Primary Data), ດັ່ງນັ້ນ ການລວບລວມຂໍ້ມູນເພື່ອໃຊ້ເຂົ້າໃນການວິເຄາະ ຜູ້ສຶກສາໄດ້ມີການລົງເກັບຂໍ້ມູນໂດຍການແຈກຢາຍແບບສອບຖາມ ນຳບັນດາຄົວເຮືອນຂອງປະຊາຊົນທີ່ເປັນກຸ່ມຕົວຢ່າງ ເທື່ອລະຄົວເຮືອນ ພ້ອມທັງໄດ້ມີການອະທິບາຍເນື້ອໃນແບບສອ

ຖາມໃຫ້ຜູ້ຕອບແບບສອບຖາມມີຄວາມເຂົ້າໃຈຢ່າງຈະແຈ້ງ ແລ້ວຈົດບັນທຶກເອົາຂໍ້ມູນຈາກຜູ້ໃຫ້ຂໍ້ມູນດ້ວຍຕົນເອງ.

## 2.4 ການວິເຄາະຂໍ້ມູນ

ຂໍ້ມູນທັງໝົດທີ່ໄດ້ຈາກແບບສອບຖາມ ແມ່ນນາມາວິເຄາະໂດຍໃຊ້ໂປຼແກມວິເຄາະຂໍ້ມູນທາງສະຖິຕິ (SPSS Version 27) ເພື່ອຫາຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ຂອງບັນດາ ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງດັດຊະນີຄວາມທຸກຍາກຂອງຄົວເຮືອນ. ພ້ອມກັນນັ້ນ ຍັງໄດ້ໃຊ້ສູດ ແບບຈາລອງດັດສະນີຄວາມທຸກຍາກຂອງຄົວເຮືອນດັ່ງນີ້:

$$PGI = \beta_1(x_1) + \beta_2(x_2) + \beta_3(x_3) + \beta_4(x_4) + \beta_5(x_5) + \beta_6(x_6) + \beta_7(x_7) + \beta_8(x_8) + \beta_9(x_9) + \epsilon_i$$

ໂດຍທີ່ PGI ແມ່ນດັດຊະນີຂອງຜູ້ທຸກຍາກ (ເປີເຊັນ).

- $x_1$ ຈຳນວນສະມາຊິກໃນຄົວເຮືອນ.
- $x_2$ ຈຳນວນສະມາຊິກທີ່ສາມາດສ້າງລາຍຮັບໃນຄົວເຮືອນ.
- $x_3$ ຈຳນວນສະມາຊິກຜູ້ເພິ່ງພາໃນຄົວເຮືອນ.
- $x_4$ ລາຍໄດ້ຂອງຄົວເຮືອນ.
- $x_5$ ຊັບສິນຂອງຄົວເຮືອນ.
- $x_6$ ສະພາບແວດລ້ອມຂອງຄົວເຮືອນ (ເສັ້ນທາງຄົມມະນາຄົມ, ໄຟຟ້າ, ການຊົມໃຊ້ນ້ຳ, ສະ ພາບທີ່ຢູ່ອາໄສ).
- $x_7$ ອັດຕາສ່ວນການບັນລຸດ້ານການສຶກສາຂັ້ນພື້ນຖານຂອງຄົວເຮືອນ.
- $x_8$ ອັດຕາສ່ວນການບັນລຸດ້ານການສຶກສາຂັ້ນສູງຂອງຄົວເຮືອນ.
- $x_9$ ອັດຕາສ່ວນການເຂົ້າເຖິງການບໍລິການສາທາລະນະສຸກຂອງຄົວເຮືອນ.
- $\beta_1 - \beta_9$ ແມ່ນຄ່າສຳປະສິດ ຫຼື ຕົວຄູນພາລາມິເຕີຂອງຕົວປ່ຽນອິດສະຫຼະ.
- $\varepsilon$ ແມ່ນຄ່າຄວາມຄາດເຄື່ອນ.

## 3. ຜົນໄດ້ຮັບ

ຈາກຜົນການສຶກສາພົບວ່າ ປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງ ໂດຍສະເລ່ຍຄົວເຮືອນໜຶ່ງຈະມີສະມາ ຊິກຢູ່ 5-6 ຄົນ, ໃນນັ້ນໂດຍສ່ວນໃຫຍ່ຈະເປັນຄົວເຮືອນທີ່ມີສະມາຊິກ 4-5 ຄົນ ກວມເອົາ 41.1%; ຮອງລົງມາແມ່ນຄົວເຮືອນທີ່ມີສະມາ ຊິກ 6-7 ຄົນ ກວມເອົາ 31.4% ແລະ ຈາກກຸ່ມຕົວຢ່າງທັງໝົດຈຳນວນ 287 ຄົວເຮືອນ ແມ່ນຍັງມີສະມາ ຊິກຄົວເຮືອນທີ່ເປັນຜູ້ເພິ່ງພາທັງໝົດ 750 ຄົນ ເຊິ່ງກວມເອົາ 40.5% ຂອງຈຳນວນປະຊາຊົນທັງໝົດ; ໃນນັ້ນຜູ້ເພິ່ງພາທີ່ຍັງເປັນເດັກນ້ອຍ ມີເຖິງ 618 ຄົນ ຄິດເປັນ 82.4% ຂອງຈຳນວນຜູ້ເພິ່ງພາທັງໝົດໃນຈຳນວນ 254 ຄົວເຮືອນ ກວມເອົາອັດ ຕາສ່ວນ 88.5% ຂອງຈຳນວນຄົວເຮືອນທັງໝົດ; ຜູ້ເພິ່ງພາທີ່ເປັນຜູ້ສູງອາຍຸ ມີຈຳນວນ 98 ຄົນ ຄິດເປັນ 13.1% ຂອງຈຳນວນຜູ້ເພິ່ງພາທັງ ໝົດ ໃນຈຳນວນ 71 ຄົວເຮືອນ ກວມເອົາອັດຕາສ່ວນ 24.7% ຂອງຈຳນວນຄົວເຮືອນທັງໝົດ ແລະ ເພິ່ງພາທີ່ເປັນຄົນພິ ການ ມີຈຳນວນ 34 ຄົນ ຄິດເປັນ 4.5% ຂອງຈຳນວນຜູ້ເພິ່ງພາທັງໝົດ ໃນຈຳນວນ 30 ຄົວເຮືອນ ກວມເອົາອັດຕາສ່ວນ 10.5% ຂອງຈຳນວນຄົວເຮືອນທັງໝົດ. ສະມາຊິກໃນຄົວເຮືອນ ໂດຍສ່ວນໃຫຍ່ແມ່ນປະກອບອາຊີບໃນການເຮັດໄຮ່ ເຊິ່ງມີຈຳ 246 ຄົວເຮືອນ ກວມເອົາ 85.7%; ຮອງລົງມາແມ່ນ ປະກອບອາຊີບໃນການເຮັດສວນ ຈຳນວນ 22 ຄົວເຮືອນ ກວມເອົາ 7.7%; ຖັດມາແມ່ນ ປະກອບອາຊີບໃນການເຮັດນາ ຈຳນວນ 15 ຄົວເຮືອນ ກວມເອົາ 5.2% ແລະ ປະກອບອາຊີບເປັນກຳມະກອນ ຈຳນວນ 4 ຄົວເຮືອນ ກວມເອົາ 1.4%. ພ້ອມດຽວກັນນັ້ນສະມາຊິກໃນແຕ່ລະຄົວເຮືອນກໍ່ຍັງໄດ້ປະກອບອາຊີບສຳຮອງ ເຊິ່ງມີ 210 ຄົວເຮືອນ ກວມເອົາ 73.2% ຂອງຈຳນວນຄົວເຮືອນທັງໝົດ. ໂດຍສ່ວນໃຫຍ່ແມ່ນ

ປະກອບອາ ຊີບໃນການເກັບແຂມມາຂາຍ ເຊິ່ງມີຈຳນວນ 101 ຄົວເຮືອນ ກວມເອົາ 48.0%; ຮອງລົງມາແມ່ນ ເກັບປໍສາເພື່ອມາຂາຍ ຈຳນວນ 58 ຄົວເຮືອນ ກວມເອົາ 27.0%; ຖັດມາແມ່ນ ເກັບເຫັດແດງມາຂາຍ ຈຳນວນ 37 ຄົວເຮືອນ ກວມເອົາ 17.3%; ລ້ຽງໝູ ຈຳນວນ 9 ຄົວເຮືອນ ກວມເອົາ 4.0% ແລະ ລ້ຽງງົວ ຈຳນວນ 8 ຄົວເຮືອນ ກວມເອົາ 3.7%. ປະຊາຊົນໂດຍສ່ວນໃຫຍ່ຈະມີລາຍຮັບໂດຍສະເລ່ຍຕໍ່ຄົວເຮືອນ/ປີ ຢູ່ທີ່ 20,418,118 ກີບ ແລະ ມີລາຍຮັບໂດຍສະເລ່ຍ/ຫົວຄົນ/ປີ ຢູ່ທີ່ 3,708,861 ກີບ ແລະ ມີລາຍຈ່າຍໂດຍສະເລ່ຍ/ຄົວເຮືອນ/ປີ ຢູ່ທີ່ 21,928,582 ກີບ ແລະ ມີລາຍຮັບໂດຍສະເລ່ຍ/ຫົວຄົນ/ປີ ຢູ່ທີ່ 3,983,230 ກີບ ແລະ ຍັງມີປະຊາຊົນຈຳນວນ 23 ຄົວເຮືອນຍັງມີໜີ້ສິນສະເລ່ຍຢູ່ທີ່ 2,711,304 ກີບ/ຄົວເຮືອນ ເນື່ອງມາຈາກກູ້ຢືມມາເພື່ອໃຊ້ໃນການຜະລິດກະສິກຳ ກວມເອົາ 56.5% ແລະ ກູ້ຢືມມາເພື່ອໃຊ້ໃນເວລາເຈັບປ່ວຍ ກວມເອົາ 43.5% ຕາມລຳດັບ. ສຳລັບຜົນການສຶກສາອົງປະກອບຄວາມທຸກຍາກດ້ານເງື່ອນໄຂອຳນວຍຄວາມສະດວກຕ່າງໆ ພົບວ່າ: ການເດີນທາງເຂົ້າອອກແມ່ນມີພຽງຊ່ອງທາງດຽວຄື: ເສັ້ນທາງຄົມມະນາຄົມທາງບົກ ແຕ່ເສັ້ນທາງເຂົ້າມາເຖິງທີ່ຢູ່ອາໄສແມ່ນມີຄວາມລຳບາກ ແລະ ນຳໃຊ້ໄດ້ບາງລະດູການເທົ່ານັ້ນ ແລະ ບໍ່ມີເສັ້ນທາງເຂົ້າເຖິງສະຖານທີ່ທຳການຜະລິດ; ມີປະຊາຊົນພຽງບາງສ່ວນເທົ່ານັ້ນທີ່ສາມາດເຂົ້າເຖິງການຊົມໃຊ້ພະລັງງານໄຟຟ້າ ໂດຍສະເພາະການຊົມໃຊ້ໄຟຟ້າ ທີ່ມີກົງເຕີເປັນຂອງຕົນເອງ ມີພຽງ 6.6%; ການຊົມໃຊ້ໄຟຟ້າ ທີ່ຕໍ່ມາຈາກຄົວເຮືອນອື່ນ 26.8%; ການນຳໃຊ້ພະລັງ ງານແສງອາທິດ (ລະບົບໂຊລາເຊລ) 26.1% ຂອງຈຳນວນຄົວເຮືອນທັງໝົດເທົ່ານັ້ນ. ສ່ວນສຳລັບການຊົມໃຊ້ນ້ຳ ພົບວ່າ: ປະຊາຊົນທຸກຄົວເຮືອນຍັງບໍ່ສາມາດເຂົ້າເຖິງການຊົມໃຊ້ນ້ຳປະປາ, ມີພຽງນຳໃຊ້ນ້ຳຈາກແຫຼ່ງນ້ຳ (ນ້ຳສ້າງ, ນ້ຳຫ້ວຍ, ນ້ຳບາດານ) ເທົ່ານັ້ນ; ແຕ່ການຊົມໃຊ້ນ້ຳຈາກແຫຼ່ງນ້ຳ (ນ້ຳສ້າງ, ນ້ຳຫ້ວຍ, ນ້ຳບາດານ) ໄດ້ຢ່າງພຽງພໍມີພຽງ 41.8% ຂອງຈຳນວນຄົວເຮືອນທັງໝົດເທົ່ານັ້ນ. ດ້ານສະພາບຂອງທີ່ຢູ່ອາໄສພົບວ່າ: ປະຊາຊົນທຸກຄົວເຮືອນແມ່ນບໍ່ມີເຮືອນຢູ່ແບບຖາວອນ ມີພຽງເຮືອນຢູ່ແບບເຄິ່ງຖາວອນ ແລະ ເຮືອນຢູ່ຊົ່ວຄາວເທົ່ານັ້ນ; ເຊິ່ງປະຊາຊົນທີ່ມີເຮືອນຢູແບບເຄິ່ງຖາວອນ ກວມເອົາພຽງ 13.2% ແລະ ເຮືອນຢູ່ຊົ່ວຄາວ ກວມເອົາ 86.8% ຂອງຈຳນວນຄົວເຮືອນທັງໝົດ. ນອກຈາກນີ້ ປະຊາຊົນແຕ່ລະຄົວເຮືອນ ແມ່ນໄດ້ມີການນຳໃຊ້ໂທລະສັບຕັ້ງໂຕະໃນການສື່ສານ 61.3% ແລະ ການນຳໃຊ້ໂທລະສັບມືຖືໃນການສື່ສານ 50.2% ຂອງຈຳນວນຄົວເຮືອນທັງໝົດ.

ສຳລັບຜົນການສຶກສາດ້ານປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງດັດຊະນີຄວາມທຸກຍາກພາກຄົວເຮືອນຂອງປະຊາຊົນເມືອງໂພນໄຊ ແຂວງຫຼວງພະບາງ ໂດຍການວິເຄາະສົມຜົນຖົດຖອຍພະຫຸຄູນ ດ້ວຍວິທີກຳລັງສອງນ້ອຍສຸດ ພົບວ່າ: ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງດັດຊະນີຄວາມທຸກຍາກຂອງປະຊາຊົນເມືອງໂພນໄຊ ແຂວງຫຼວງພະບາງ ແມ່ນສາມາດນຳໃຊ້ໄດ້ ແລະ ຂຶ້ນຢູ່ກັບປັດໄຈທີ່ກຳນົດມາຢ່າງໜ້ອຍ 1 ປັດໄຈ. ເຊິ່ງຜ່ານການກວດສອບຄຸນສົມບັດຂອງແບບຈຳລອງພົບວ່າ ຄ່າສຳປະສິດການຕັດສິນໃຈ Adjusted R Square = 0.442 ເຊິ່ງໝາຍຄວາມວ່າດັດຊະນີຄວາມທຸກຍາກຂອງປະຊາຊົນເມືອງໂພນໄຊ ແຂວງຫຼວງພະບາງ ສາມາດອະທິບາຍດ້ວຍຕົວປ່ຽນອິດສະຫຼະທີ່ກຳນົດຂຶ້ນມາໃນລະດັບ 44.2%, ສ່ວນທີ່ເຫຼືອແມ່ນຂຶ້ນຢູ່ກັບປັດໄຈອື່ນໆທີ່ບໍ່ໄດ້ນຳເຂົ້າມາສຶກສາ. ເຊິ່ງຜ່ານການກວດສອບຄຸນ ສົມບັດຂອງແບບຈຳລອງຄວາມສຳພັນລະຫວ່າງດັດຊະນີຄວາມທຸກຍາກຂອງປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງ ກັບປັດໄຈຕ່າງໆ 9 ປັດໄຈສາມາດສະຫຼຸບໄດ້ວ່າ: ມີພຽງ 6 ປັດໄຈຄື: ປັດໄຈດ້ານຈຳນວນສະມາຊິກໃນຄົວເຮືອນ ($x_1$), ປັດໄຈດ້ານຈຳນວນສະມາຊິກທີ່ສາມາດສ້າງລາຍໄດ້ໃນຄົວເຮືອນ ($x_2$), ປັດໄຈດ້ານລາຍໄດ້ຂອງຄົວເຮືອນ (**$x_4$**), ປັດໄຈດ້ານການຊັບສິນຂອງຄົວເຮືອນ ($x_5$), ປັດໄຈດ້ານສະພາບແວດລ້ອມຂອງຄົວເຮືອນ (ເສັ້ນທາງຄົມມະນາຄົມ, ໄຟຟ້າ, ການຊົມໃຊ້ນ້ຳ , ສະພາບທີ່ຢູ່ອາໄສ) ($x_6$) ແລະ ອັດຕາສ່ວນການບັນລຸດ້ານການສຶກສາຂັ້ນພື້ນຖານຂອງຄົວເຮືອນ ($x_7$) ເທົ່ານັ້ນທີ່ມີ

HER et al. (2024). Souphanouvong University Journal of Multidisciplinary Research and Development.
ISSN 2521-0653. Volume 10. Issue 2. Apr - Jun. 2024. Page 133 - 144

ຄວາມສຳຄັນທາງສະຖິຕິ; ສ່ວນໄຈດ້ານຈຳນວນສະມາຊິກຜູ້ເພິ່ງພາ ($x_3$); ປັດໄຈດ້ານອັດຕາສ່ວນການບັນລຸດ້ານການສຶກສາຂັ້ນສູງຂອງຄົວເຮືອນ ($x_8$) ແລະ ປັດໄຈດ້ານອັດຕາສ່ວນການເຂົ້າເຖິງການບໍລິການສາທາລະນະສຸກຂອງຄົວເຮືອນ ($x_9$) ແມ່ນບໍ່ມີຄວາມສຳຄັນທາງສະຖິຕິເຊິ່ງສາມາດນຳມາສ້າງແບບຈຳລອງທາງດ້ານເສດຖາມິຕິໄດ້ດັ່ງນີ້:

$$\text{PGI} = 0.633 + 0.076\ \text{X}_1 - 0.042\ \text{X}_2 - 0.244\ \text{X}_4 - 0.014\ \text{X}_5 - 0.043\ \text{X}_6 - 0.105\ \text{X}_7$$

$$(11.702^{***})\quad(-2.525^{**})\quad(-8.385^{***})\quad(-2.377^{**})\quad(-2.624^{***})\quad(-1.709^{*})$$

ຈາກແບບຈຳລອງຂ້າງເທິງ ສາມາດອະທິບາຍຜົນຂອງການທົດສອບຄວາມແຕກຕ່າງຄ່າສະເລ່ຍຂອງຕົວປ່ຽນດ້ວຍສະຖິຕິທົດສອບ (t-test) ສາມາດອະທິບາຍຜົນໄດ້ດັ່ງນີ້:

1) ປັດໄຈດ້ານຈຳນວນສະມາຊິກໃນຄົວເຮືອນ ($\text{X}_1$) ມີການພົວພັນໄປໃນທິດທາງດຽວກັນກັບດັດຊະນີຄວາມທຸກຍາກຂອງຄົວເຮືອນນັ້ນຄື: ຖ້າຈານວນສະມາຊິກໃນຄົວເຮືອນ ເພີ່ມຂຶ້ນ 1 ຄົນ ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງຄົວເຮືອນນັ້ນ ເພີ່ມຂຶ້ນ 0.076%, ໃນທາງກົງກັນຂ້າມຖ້າຈຳນວນສະມາຊິກໃນຄົວເຮືອນຫາກນ້ອຍກວ່າຄົວເຮືອນອື່ນ 1 ຄົນ ກໍ່ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງຄົວເຮືອນນັ້ນ ລຸດລົງ 0.076%, ດ້ວຍລະດັບຄວາມເຊື່ອໝັ້ນ 99%. ເຊິ່ງສອດຄ່ອງກັບສົມມຸດຖານທີ່ວາງໄວ້.

2) ປັດໄຈດ້ານຈຳນວນສະມາຊິກທີ່ສາມາດສ້າງລາຍຮັບໃນຄົວເຮືອນ ($\text{X}_2$) ມີການພົວພັນໄປໃນທິດທາງກົງກັນຂ້າມກັບດັດຊະນີຄວາມທຸກຍາກຂອງຄົວເຮືອນຄື: ຖ້າດ້ານຈຳນວນສະມາຊິກທີ່ສາມາດສ້າງລາຍຮັບໃນຄົວເຮືອນເພີ່ມຂຶ້ນ 1 ຄົນ ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງຄົວເຮືອນນັ້ນ ລຸດລົງ 0.042%, ໃນທິດທາງກົງກັນຂ້າມກັນ ຖ້າຈຳນວນສະມາຊິກທີ່ສາມາດສ້າງລາຍຮັບໃນຄົວເຮືອນຫາກນ້ອຍກວ່າຄົວເຮືອນອື່ນ 1 ຄົນ ກໍ່ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງຄົວເຮືອນນັ້ນເພີ່ມຂຶ້ນ 0.042%, ດ້ວຍລະດັບຄວາມເຊື່ອໝັ້ນ 95%. ເຊິ່ງສອດຄ່ອງກັບສົມມຸດຖານທີ່ວາງໄວ້.

3) ປັດໄຈດ້ານລາຍໄດ້ຂອງຄົວເຮືອນ ($\text{X}_4$) ມີການພົວພັນໄປໃນທິດທາງກົງກັນຂ້າມກັບດັດຊະນີຄວາມທຸກຍາກຂອງຄົວເຮືອນນັ້ນຄື: ຖ້າລາຍໄດ້ຂອງຄົວເຮືອນ ເພີ່ມຂຶ້ນ 1 ກີບ ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມ ທຸກຍາກຂອງຄົວເຮືອນນັ້ນ ລຸດລົງ 0.244%, ໃນທິດທາງກົງຂ້າມກັນ ຖ້າລາຍໄດ້ຂອງຄົວເຮືອນ ຫາກລຸດລົງ 1 ກີບ ກໍ່ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງຄົວເຮືອນ ເພີ່ມຂຶ້ນ 0.244%, ດ້ວຍລະດັບຄວາມເຊື່ອໝັ້ນ 99%. ເຊິ່ງສອດຄ່ອງກັບສົມມຸດຖານທີ່ວາງໄວ້.

4) ປັດໄຈດ້ານຈຳນວນຊັບສິນຂອງຄົວເຮືອນ ($\text{X}_5$) ມີການພົວພັນໄປໃນທິດທາງກົງກັນຂ້າມກັບດັດຊະນີຄວາມທຸກຍາກຂອງຄົວເຮືອນນັ້ນຄື: ຖ້າຈານວນຊັບສິນຂອງຄົວເຮືອນ ເພີ່ມຂຶ້ນ 1 ກີບ ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງຄົວເຮືອນນັ້ນ ລຸດລົງ 0.014%, ໃນທິດທາງກົງກັນຂ້າມກັນ ຖ້າຈານວນຊັບສິນຂອງຄົວເຮືອນຫາກລຸດລົງ 1 ກີບ ກໍ່ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງຄົວເຮືອນນັ້ນ ເພີ່ມຂຶ້ນ 0.014%, ດ້ວຍລະດັບຄວາມເຊື່ອໝັ້ນ 95%. ເຊິ່ງສອດຄ່ອງກັບສົມມຸດຖານທີ່ວາງໄວ້.

5) ປັດໄຈດ້ານສະພາບແວດລ້ອມຂອງຄົວເຮືອນ ($\text{X}_6$) ມີການພົວພັນໄປໃນທິດທາງກົງກັນຂ້າມກັບດັດຊະນີຄວາມທຸກຍາກຂອງຄົວເຮືອນນັ້ນຄື: ຖ້າສະພາບແວດລ້ອມຂອງຄົວເຮືອນ ເພີ່ມຂຶ້ນ 1 ລະດັບ ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງຄົວເຮືອນນັ້ນ ລຸດລົງ 0.043%, ໃນທິດທາງກົງກັນຂ້າມ ຖ້າສະພາບແວດລ້ອມຂອງຄົວເຮືອນຫາກລຸດລົງ 1 ລະດັບ ກໍ່ຈະສົ່ງຜົນເຮັດໃຫ້

ດັດຊະນີຄວາມທຸກຍາກຂອງຄົວເຮືອນ ເພີ່ມຂຶ້ນ 0.043%, ດ້ວຍລະດັບຄວາມເຊື່ອໝັ້ນ 99%. ເຊິ່ງສອດຄ່ອງກັບສົມມຸດຖານທີ່ວາງໄວ້.

6) ປັດໄຈດ້ານອັດຕາສ່ວນການບັນລຸດ້ານການສຶກສາຂັ້ນພື້ນຖານຂອງຄົວເຮືອນ ($X_7$) ມີການພົວພັນໄປໃນທິດທາງກົງກັນຂ້າມກັບດັດຊະນີຄວາມທຸກຍາກຂອງຄົວເຮືອນນັ້ນຄື: ຖ້າອັດຕາສ່ວນການບັນລຸດ້ານການສຶກສາຂັ້ນພື້ນຖານຂອງຄົວເຮືອນ ເພີ່ມຂຶ້ນ 1 ຄົນ ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງຄົວເຮືອນນັ້ນ ລຸດລົງ 0.105%, ໃນທາງກົງກັນຂ້າມ ຖ້າອັດຕາສ່ວນການບັນລຸດ້ານການສຶກສາຂັ້ນພື້ນຖານຂອງຄົວເຮືອນຫາກນ້ອຍກວ່າຄົວເຮືອນອື່ນ 1 ຄົນ ກໍ່ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງຄົວເຮືອນນັ້ນ ເພີ່ມຂຶ້ນ 0.105%, ດ້ວຍລະດັບຄວາມເຊື່ອໝັ້ນ 90%. ເຊິ່ງສອດຄ່ອງກັບສົມມຸດຖານທີ່ວາງໄວ້.

## 4. ວິພາກຜົນ

ຜົນການສຶກສາອີງປະກອບຂອງຕົວຊີ້ວັດຄວາມທຸກຍາກພົບວ່າ ຄວາມທຸກຍາກຂອງຄົວເຮືອນໃນເມືອງໂພນໄຊ ແຂວງຫຼວງພະບາງ ແມ່ນມີສາເຫດມາຈາກການມີສະມາຊິກ ແລະ ຈຳນວນສະມາຊິກຜູ້ເພິ່ງພາທີ່ເປັນເດັກນ້ອຍ, ຜູ້ສູງອາຍຸ ແລະ ຄົນພິການໃນຄົວເຮືອນຈຳນວນຫຼາຍ; ສະມາຊິກໃນຄົວເຮືອນ ໂດຍສ່ວນໃຫຍ່ແມ່ນປະກອບອາຊີບໃນການເຮັດໄຮ່ ແລະ ການເຮັດສວນ ສົ່ງຜົນໃຫ້ແຕ່ລະຄົວເຮືອນຍັງມີລາຍຮັບ ແລະ ລາຍຮັບໂດຍສະເລ່ຍຕໍ່ຫົວຄົນ ຂ້ອນຂ້າງຕ່ຳ ແລະ ຍັງບໍ່ສາມາດບັນລຸຕາມເງື່ອນໄຂ ແລະ ມາດຕະຖານຂອງການພົ້ນທຸກໄດ້. ພ້ອມນັ້ນຍັງມີປະຊາຊົນຈຳນວນໜຶ່ງ ກໍ່ຍັງມີການກໍ່ໜີ້ສິນອັນເນື່ອງມາຈາກກູ້ຢືມມາເພື່ອໃຊ້ໃນການຜະລິດກະສິກຳ ແລະ ເພື່ອໃຊ້ໃນເວລາເຈັບປ່ວຍ ອີກດ້ວຍ. ສຳລັບມາດຖານການເດີນທາງເຂົ້າອອກແມ່ນມີພຽງຊ່ອງທາງດຽວຄື: ເສັ້ນທາງຄົມມະນາຄົມທາງບົກ ແຕ່ເສັ້ນທາງເຂົ້າມາເຖິງທີ່ຢູ່ອາໄສແມ່ນມີຄວາມລຳບາກ ແລະ ນຳໃຊ້ໄດ້ບາງລະດູການເທົ່ານັ້ນ ແລະ ບໍ່ມີເສັ້ນທາງເຂົ້າເຖິງສະຖານທີ່ທຳການຜະລິດ; ມີປະຊາ ຊົນໂດຍສ່ວນຫຼາຍຍັງບໍ່ສາມາດເຂົ້າເຖິງລະບົບຕາຂ່າຍໄຟຟ້າ ແລະ ລະບົບນ້ຳປະປາ; ຫຼາຍຄົວເຮືອນຍັງບໍ່ມີເຮືອນຢູ່ແບບຖາ ວອນ, ມີພຽງເຮືອນຢູ່ແບບເຄິ່ງຖາວອນ ແລະ ເຮືອນຢູ່ຊົ່ວຄາວເທົ່ານັ້ນ ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Phawasutthipaisit (2017) ທີ່ວ່າອີງປະກອບຫຼັກຂອງຕົວຊີ້ວັດຄວາມທຸກຍາກຂອງຄົວເຮືອນນັ້ນ ແມ່ນມີສາເຫດມາຈາກການທີ່ຄົວເຮືອນມີຈຳນວນສະມາຊິກ ແລະ ຈຳນວນສະມາຊິກຜູ້ເພິ່ງພາທີ່ເປັນເດັກນ້ອຍ, ຜູ້ສູງອາຍຸ ແລະ ຄົນພິການໃນຄົວເຮືອນຈຳນວນຫຼາຍແມ່ນຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຍິ່ງເພີ່ມຂຶ້ນ; ນອກຈາກນີ້ ການຕິດຕໍ່ສື່ສານກັນຂອງປະຊາຊົນແມ່ນມີການນຳໃຊ້ໂທລະສັບຕັ້ງໂຕະໃນການສື່ສານ ເຮັດໃຫ້ບໍ່ສາມາດເຂົ້າເຖິງຂໍ້ມູນຂ່າວສານໄດ້ຢ່າງເຕັມປະສິດທິພາບ. ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Traksri (1998) ທີ່ວ່າ: ຄົວເຮືອນທີ່ຜະລິດການກະສິກຳໂດຍສ່ວນໃຫຍ່ຍັງມີລາຍໄດ້ໃນລະດັບຕ່ຳກວ່າເສັ້ນຄວາມທຸກຍາກ.

ສຳລັບຜົນການສຶກສາປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງດັດຊະນີຄວາມທຸກຍາກພາກຄົວເຮືອນຂອງເມືອງໂພນໄຊ ແຂວງຫຼວງພະບາງພົບວ່າ: ປັດໄຈລາຍຮັບຂອງຄົວເຮືອນ, ຈຳນວນສະມາຊິກທີ່ສາມາດສ້າງລາຍໄດ້ໃນຄອບຄົວ ແລະ ປັດໄຈດ້ານການເຂົ້າເຖິງລະດັບການສຶກສາລະດັບສູງຂອງສະມາຊິກໃນຄົວເຮືອນ ມີການພົວພັນໄປໃນທິດທາງກົງກັນຂ້າມກັນກັບດັດຊະນີຄວາມທຸກຍາກຂອງປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງ ນັ້ນຄື: ເມື່ອສະມາຊິກໃນຄົວເຮືອນມີສະ ມາຊິກທີ່ສາມາດສ້າງລາຍໄດ້ເພີ່ມຂຶ້ນ ກໍ່ຈະເຮັດໃຫ້ລາຍໄດ້ຂອງຄົວເຮືອນເພີ່ມຂຶ້ນ ເຊິ່ງຈະສົ່ງຜົນເຮັດໃຫ້ດັດຊະນີຄວາມ ທຸກຍາກລຸດລົງ. ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Kaewmee (2007) ທີ່ສຶກສາ the poverty incidence of agricultural households ແລະ ສອດຄ່ອງກັບຜົນການສຶກສາຂອງ CHANHTANGUEN et al., (2023) ທີ່ວ່າລະດັບການສຶກສາສູງຂຶ້ນ ຈະສົ່ງຜົນເຮັດໃຫ້ຄວາມສາມາດໃນການສ້າງ

ລາຍໄດ້ຂອງສະມາຊິກເພີ່ມຂຶ້ນ ແລະ ເຮັດໃຫ້ລາຍໄດ້ຂອງຄົວເຮືອນເພີ່ມຂຶ້ນ ແລະ ເມື່ອລະດັບລາຍໄດ້ຂອງຄົວເຮືອນເພີ່ມຂຶ້ນກໍ່ຈະເຮັດໃຫ້ພາວະຄວາມທຸກຍາກລຸດລົງ ແລະ ຍັງສອດຄ່ອງກັບຜົນການສຶກສາຂອງ Iswilanon (2008) ບັນຫາຄວາມຍາກຈົນຂອງຄົວເຮືອນທີ່ຜະລິດກະສິກໍາ ແລະ ຍັງສອດຄ່ອງກັບຜົນການສຶກສາຂອງ Schneider & Gugerty (2011) ທີ່ວ່າ: ປັດໄຈທີ່ມີຜົນຕໍ່ຄວາມຍາກຈົນແມ່ນຂຶ້ນຢູ່ກັບຈໍານວນສະມາ ຊິກໃນຄົວເຮືອນ, ການສຶກສາຂອງຫົວໜ້າຄົວເຮືອນ, ຈໍານວນສະມາຊິກໃນໄວແຮງງານ, ລາຍໄດ້ຂອງຄົວເຮືອນ, ພາວະໜີ້ສິນ, ລັກສະນະການຖືຄອງທີ່ດິນ ແລະ ພື້ນທີ່ໃນເຂດຊົນລະປະທານ. ສໍາລັບປັດໄຈດ້ານການເຂົ້າເຖິງລະດັບການສຶກສາຂັ້ນສູງຂອງສະມາຊິກໃນຄົວເຮືອນ ມີການພົວພັນໄປໃນທິດທາງກົງກັນຂ້າມກັນກັບດັດຊະນີຄວາມທຸກຍາກຂອງປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງ ນັ້ນຄື: ເມື່ອຈໍານວນສະມາຊິກໃນຄົວເຮືອນມີໂອກາດເຂົ້າເຖິງລະດັບການສຶກສາໃນລະດັບເພີ່ມຂຶ້ນ ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງເພີ່ມຂຶ້ນ ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Chotikhamjorn (2021) ທີ່ສຶກສາເລື່ອງ The Study of Poverty and Factor Affecting Poverty in Thailand ແລະ ສອດຄ່ອງກັບຜົນການສຶກສາຂອງ Leetrakun (2019) ທີ່ວ່າ ຈໍານວນຜູ້ສໍາເລັດການສຶກສາຂັ້ນພື້ນຖານໃນປະເທດ ມີຄວາມສໍາພັນໃນທິດທາງກົງກັນຂ້າມກັບສັດສ່ວນຄົນທຸກຈົນ ນັ້ນຄື: ຈໍານວນຜູ້ສໍາເລັດການສຶກສາຂັ້ນພື້ນຖານໃນປະເທດເພີ່ມຂຶ້ນ ຈະສົ່ງຜົນໃຫ້ສັດສ່ວນຄົນທຸກຈົນລຸດລົງ. ສ່ວນປັດໄຈດ້ານການເຂົ້າເຖິງລະດັບການສຶກສາຂັ້ນພື້ນຖານຂອງສະມາຊິກໃນຄົວເຮືອນ ມີການພົວພັນໄປໃນທິດທາງດຽວກັນກັບດັດຊະນີຄວາມທຸກຍາກຂອງປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງ ນັ້ນຄື: ເມື່ອຈໍານວນສະມາຊິກໃນຄົວເຮືອນມີໂອກາດເຂົ້າເຖິງລະດັບການສຶກສາພຽງແຕ່ຂັ້ນພື້ນຖານເທົ່ານັ້ນເພີ່ມຂຶ້ນ ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງ ເພີ່ມຂຶ້ນ ເຊິ່ງບໍ່ສອດ ຄ່ອງກັບຜົນການສຶກສາຂອງ Palasri (2013) ທີ່ວ່າ ຈໍານວນຜູ້ສໍາເລັດການສຶກສາຂັ້ນພື້ນຖານໃນປະເທດ ມີຄວາມສໍາພັນໃນທິດທາງກົງກັນຂ້າມກັບສັດສ່ວນຄົນທຸກຈົນ ນັ້ນຄື: ຈໍານວນຜູ້ສໍາເລັດການສຶກສາຂັ້ນພື້ນຖານໃນປະເທດເພີ່ມຂຶ້ນຈະສົ່ງຜົນໃຫ້ສັດສ່ວນຄົນທຸກຈົນລຸດລົງ.

## 5. ສະຫຼຸບ

ຜົນການສຶກສາຂໍ້ມູນດ້ານອົງປະກອບຂອງຄວາມທຸກຍາກຂອງຄົວເຮືອນເມືອງໂພນໄຊ ແຂວງຫຼວງພະບາງພົບວ່າໃນແຕ່ລະຄົວເຮືອນແມ່ນມີສະມາຊິກໃນຄົວເຮືອນ ແລະ ຈໍານວນສະມາຊິກຜູ້ເພິ່ງເຊັ່ນ: ເດັກນ້ອຍ, ຜູ້ສູງອາຍຸ ແລະ ຄົນພິການຂ້ອນຂ້າງຫຼາຍ; ສະມາຊິກໃນຄົວເຮືອນ ໂດຍສ່ວນໃຫຍ່ແມ່ນປະກອບອາຊີບໃນການເຮັດໄຮ່ ແລະ ເຮັດສວນ, ສໍາລັບອາຊີບສໍາຮອງສ່ວນຫຼາຍກໍ່ມີພຽງແຕ່ ເຂົ້າປ່າເພື່ອຫາເກັບເຄື່ອງປ່າຂອງດົງມາຂາຍເຊັ່ນ: ແຂມ, ປໍສາ, ເຫັດແດງ. ສໍາລັບການລ້ຽງສັດແມ່ນມີພຽງເລັກນ້ອຍເຊັ່ນ: ລ້ຽງໝູ ແລະ ລ້ຽງງົວ ເທົ່ານັ້ນ. ເຮັດມີລາຍຮັບສະເລ່ຍຕໍ່ຄົວເຮືອນ ແລະ ລາຍຮັບສະເລ່ຍຕໍ່ຫົວຄົນ ຂ້ອນຂ້າງຕໍ່າ ແລະ ຍັງເກີດມີໜີ້ສິນຈໍານວນໜຶ່ງ ບໍ່ສາມາດບັນລຸຕາມເງື່ອນໄຂ ແລະ ມາດຖານການລຸດພົ້ນຄວາມທຸກຍາກໄດ້. ສໍາລັບຜົນການສຶກສາອົງປະກອບຕົວຊີ້ວັດຄວາມທຸກຍາກດ້ານເງື່ອນໄຂອໍານວຍຄວາມສະດວກຕ່າງໆຈະເຫັນໄດ້ວ່າ: ການເດີນທາງເຂົ້າອອກແມ່ນມີພຽງຊ່ອງທາງດຽວຄື: ເສັ້ນທາງຄົມມະນາຄົມທາງບົກ ແຕ່ເສັ້ນທາງເຂົ້າມາເຖິງທີ່ຢູ່ອາໄສແມ່ນມີຄວາມລໍາບາກ ແລະ ນໍາໃຊ້ໄດ້ບາງລະດູການເທົ່ານັ້ນ ແລະ ບໍ່ມີເສັ້ນທາງເຂົ້າເຖິງສະຖານທີ່ທໍາການຜະລິດ; ມີປະຊາຊົນພຽງບາງສ່ວນເທົ່ານັ້ນທີ່ສາມາດເຂົ້າເຖິງການຊົມໃຊ້ພະລັງງານໄຟຟ້າ ໂດຍສະເພາະການຊົມໃຊ້ໄຟຟ້າ ທີ່ມີກົງເຕີເປັນຂອງຕົນເອງ, ການຊົມໃຊ້ໄຟຟ້າ ທີ່ຕໍ່ມາຈາກຄົວເຮືອນອື່ນ ແລະ ການນໍາໃຊ້ພະລັງງານແສງອາທິດ (ລະບົບໂຊລາເຊລ) ກໍ່ມີພຽງສ່ວນໜ້ອຍເທົ່ານັ້ນ. ປະຊາຊົນທຸກຄົວເຮືອນຍັງບໍ່ສາມາດເຂົ້າເຖິງການຊົມໃຊ້ນໍ້າປະປາ, ມີ

ພຽງນຳໃຊ້ ນ້ຳຈາກແຫຼ່ງນ້ຳ (ນ້ຳສ້າງ, ນ້ຳຫ້ວຍ, ນ້ຳບາດານ) ເທົ່ານັ້ນ; ແຕ່ການຊົມໃຊ້ນ້ຳຈາກແຫຼ່ງນ້ຳ (ນ້ຳສ້າງ, ນ້ຳຫ້ວຍ , ນ້ຳບາດານ) ກໍ່ຍັງບໍ່ພຽງພໍກັບຄວາມຕ້ອງການ. ດ້ານສະພາບຂອງທີ່ຢູ່ອາໄສ: ປະຊາຊົນທຸກຄົວເຮືອນແມ່ນບໍ່ມີເຮືອນຢູ່ແບບຖາວອນ ມີພຽງເຮືອນຢູ່ແບບເຄິ່ງຖາວອນ ແລະ ເຮືອນຢູ່ຊົ່ວຄາວເທົ່ານັ້ນ; ເຊິ່ງປະຊາຊົນທີ່ມີເຮືອນຢູ່ແບບເຄິ່ງຖາວອນ ແລະ ເຮືອນຢູ່ຊົ່ວຄາວ. ນອກຈາກນີ້ປະຊາຊົນແຕ່ລະຄົວເຮືອນ ແມ່ນໄດ້ມີການນຳໃຊ້ໂທລະສັບຕັ້ງໂຕະ ແລະ ການນຳໃຊ້ໂທລະສັບມືຖືຈຳນວນໜຶ່ງໃນການສື່ສານ ແຕ່ບາງຄັ້ງກໍ່ຍັງຂາດສັນຍານໂທລະສັບ ແລະ ສັນຍານອິນເຕີເນັດ ສິ່ງຜົນໃຫ້ລະບົບການສື່ສານບໍ່ມີປະສິດທິພາບ ແລະ ການຮັບຮູ້ ແລະ ການເຂົ້າເຖິງຂໍ້ມູນຂ່າວສານທີ່ເປັນທາງການບໍ່ທົ່ວເຖິງ.

ຜົນການສຶກສາດ້ານປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງດັດຊະນີຄວາມທຸກຍາກຂອງຄົວເຮືອນ ເມືອງໂພນໄຊ ແຂວງຫຼວງພະບາງພົບວ່າ: ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງດັດຊະນີຄວາມທຸກຍາກຂອງປະຊາຊົນເມືອງໂພນໄຊແຂວງຫຼວງພະບາງ ມີພຽງ 6 ປັດໄຈຄື: ປັດໄຈດ້ານຈຳນວນສະມາຊິກໃນຄົວເຮືອນ, ປັດໄຈດ້ານຈຳນວນສະມາຊິກທີ່ສາ ມາດສ້າງລາຍໄດ້ໃນຄົວເຮືອນ, ປັດໄຈດ້ານລາຍຮັບຂອງຄົວເຮືອນ, ປັດໄຈດ້ານຊັບສິນຂອງຄົວເຮືອນ, ປັດໄຈດ້ານສະພາບແວດລ້ອມຂອງຄົວເຮືອນ (ເສັ້ນທາງຄົມມະນາຄົມ, ໄຟຟ້າ, ການຊົມນ້ຳ, ສະພາບທີ່ຢູ່ອາໄສ) ແລະ ປັດໄຈດ້ານການເຂົ້າເຖິງການສຶກສາຂັ້ນພື້ນຖານ ເທົ່ານັ້ນທີ່ມີຄວາມສຳຄັນທາງສະຖິຕິ; ສ່ວນປັດໄຈດ້ານຈຳນວນສະມາ ຊິກຜູ້ເພິ່ງພາ; ປັດໄຈດ້ານອັດຕາສ່ວນການບັນລຸດ້ານການສຶກສາຂັ້ນສູງຂອງຄົວເຮືອນ ແລະ ປັດໄຈການເຂົ້າເຖິງລະ ບົບສາທາລະນະສຸກ ແມ່ນບໍ່ມີຄວາມສຳຄັນທາງສະຖິຕິ. ເຊິ່ງມີລາຍລະອຽດດັ່ງຕໍ່ໄປນີ້: ປັດໄຈດ້ານຈຳນວນສະມາ ຊິກໃນຄົວເຮືອນ ມີການພົວພັນໄປໃນທິດທາງດຽວກັນກັບດັດຊະນີຄວາມທຸກຍາກຂອງປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງ ນັ້ນຄື: ເມື່ອຈຳນວນສະມາຊິກໃນຄອບຄົວ ເພີ່ມຂຶ້ນ (ຫຼື ລຸດລົງ) 1 ຄົນ ໂດຍກຳນົດໃຫ້ປັດໄຈອື່ນຄົງທີ່ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງປະຊາຊົນໃນ ເມືອງໂພນໄຊ ແຂວງ ຫຼວງພະບາງ ເພີ່ມຂຶ້ນ (ຫຼື ລຸດລົງ) 0.076 ຫຼື 7.6% ດ້ວຍລະດັບຄວາມເຊື່ອໝັ້ນ 99%; ປັດໄຈດ້ານຈຳນວນສະມາຊິກທີ່ສາມາດສ້າງລາຍໄດ້ໃນຄົວເຮືອນ ມີການພົວພັນໄປໃນທິດທາງກົງກັນຂ້າມກັນກັບດັດຊະນີຄວາມທຸກຍາກຂອງປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງ ນັ້ນຄື: ເມື່ອຈຳນວນສະມາຊິກທີ່ສາມາດສ້າງລາຍໄດ້ໃນຄອບຄົວ ເພີ່ມຂຶ້ນ (ຫຼື ລຸດລົງ) 1 ຄົນ ໂດຍກຳນົດໃຫ້ປັດໄຈອື່ນຄົງທີ່ ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງ ລຸດລົງ (ຫຼື ເພີ່ມຂຶ້ນ) 0.042 ຫຼື 4.2% ດ້ວຍລະດັບຄວາມເຊື່ອໝັ້ນ 95%; ປັດໄຈລາຍໄດ້ຂອງຄົວເຮືອນ ມີການພົວພັນໄປໃນທິດທາງກົງກັນຂ້າມກັນກັບດັດຊະນີຄວາມທຸກຍາກຂອງປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງ ນັ້ນຄື: ເມື່ອຄົວເຮືອນມີລາຍຮັບ ເພີ່ມຂຶ້ນ (ຫຼື ລຸດລົງ) 1 ລ້ານກີບ/ປີ ໂດຍກຳນົດໃຫ້ປັດໄຈອື່ນຄົງທີ່ ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງ ລຸດລົງ (ຫຼື ເພີ່ມຂຶ້ນ) -0.014 ຫຼື 1.4% ດ້ວຍລະດັບຄວາມເຊື່ອໝັ້ນ 95%; ປັດໄຈດ້ານຊັບສິນຂອງຄົວເຮືອນ ມີການພົວພັນໄປໃນທິດທາງດຽວກັນກັບດັດຊະນີຄວາມທຸກຍາກຂອງປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງ ນັ້ນຄື: ເມື່ອ ຈຳນວນສະມາຊິກໃນຄົວເຮືອນມີໂອກາດເຂົ້າເຖິງລະດັບການສຶກສາພຽງແຕ່ຂັ້ນພື້ນຖານເທົ່ານັ້ນ ເພີ່ມຂຶ້ນ (ຫຼື ລຸດລົງ) 1 ຄົນ ໂດຍກຳນົດໃຫ້ປັດໄຈອື່ນຄົງທີ່ ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງ ເພີ່ມຂຶ້ນ (ຫຼື ລຸດລົງ) -0.043 ຫຼື 4.3% ດ້ວຍລະດັບຄວາມເຊື່ອໝັ້ນ 99% ແລະ ປັດໄຈດ້ານອັດຕາສ່ວນການບັນລຸດ້ານການສຶກສາຂັ້ນພື້ນຖານຂອງຄົວເຮືອນ ມີການພົວພັນໄປໃນທິດທາງກົງກັນ ຂ້າມກັນກັບດັດຊະນີຄວາມທຸກຍາກຂອງປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງ ນັ້ນຄື: ເມື່ອສະມາ ຊິກໃນຄົວເຮືອນມີໂອກາດໄດ້ຮັບການສຶກສາໃນລະດັບສູງ ເພີ່ມຂຶ້ນ

(ຫຼື ລຸດລົງ) 1 ຄົນ ໂດຍກຳນົດໃຫ້ປັດໄຈອື່ນຄົງທີ່ຈະສົ່ງຜົນເຮັດໃຫ້ດັດຊະນີຄວາມທຸກຍາກຂອງປະຊາຊົນໃນເມືອງໂພນໄຊ ແຂວງຫຼວງພະບາງ ລຸດລົງ (ຫຼື ເພີ່ມຂຶ້ນ) 0.105 ຫຼື 10.5% ດ້ວຍລະດັບຄວາມເຊື່ອໝັ້ນ 90%.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ສຶກສາ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະ ເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ

Administration office of Phonxay District. (2020). *Socio-Economic development plan 2020-2024*

Asawin Krainuch. (2007). *Changes in inequality of income distribution from national development.* [unpublished master thesis]. Chiang Mai University.

CHANHTANGUEN, C., SIPHANTHONG, B., SIOUDOMPHAN, S., & SENGDARA, C. (2023). The Analyze of relationship between income structure and household income distribution of the people Namor District, Oudomxay Province. *Souphanouvong University Journal of Multidisciplinary Research and Development*, *9*(2), 83-92.

Chotikhamjorn, S. (2021). The study of poverty and factor affecting poverty in Thailand. *journal of management science review, 23*(2), 63-72

Iswilanon, S. (2008). The problem of poverty of households that produce agriculture, *journal of the Thammasat Economics Association*, *16*(2), 82–102

Kaewmee, S. (2007). Factors affecting poverty incidence of thai agriculture households, *Asian journal of applied economics center for applied economics research, 14*(1), 17–29

Leetrakun, P. (2019). Analysis of poverty among the elderly in Chiang Rai province. *Srinakarin Wirot research and Development journal, 11*(22), 99-112

Palasri, W. (2013). The study of determinants of the household poverty in rural area: Case study of Mahasarakham Province. *Humanities and Social Sciences, 7*(1), 35.

Phawasutthipaisit, A. (2017). *Changes in poverty in rural Thailand. A case study of Townsend Thai data* (research report). Bangkok: Thailand research fund.

Saranchit, T. (2015). Poverty problems in Thai society. *Eastern Asia University academic journal social sciences and humanities edition, 5*(2), 12-21.

Schneider, K. & Gugerty, M. (2011). Agricultural productivity and poverty reduction: Linkages and Pathways. *The Evans school review, 1*(1), 69

Sidakham, K. (2020). *Comparison of human resource development index of Oudomxay and Xiengkhouang provinces, Lao PDR* [unpublished bachelor dissertation]. Souphanouvong university.

Traksri, S. (1998). *Analysis of income distribution and poverty situation of agricultural households* [unpublished master thesis]. Kasetsart University.

Wichianperit, C. (2007*). Poverty conditions and income distribution of Thai agricultural households in the 2004/05 crop year* [unpublished master dissertation]. Kasetsart University.

World Bank. (2009). *World development report 2008: Agriculture for development,* Washington D.C.: Author

ຕາຕາລາງ ສະແດງຜົນການວິເຄາະການຖົດຖອຍພະຫຸຄູນ ປັດໄຈທີ່ສົ່ງຜົນຕໍ່ການປ່ຽນແປງດັດຊະນີຄວາມທຸກຍາກ

| Model | | Unstandardized Coefficients | | Standardized Coefficients | t | Sig. |
|---|---|---|---|---|---|---|
| | | B | Std. Error | Beta | | |
| 1 | (Constant) | 0.633 | 0.084 | | 7.547 | 0.000 |
| | X1 | 0.076 | 0.006 | 0.811 | 11.702 | 0.000 |
| | X2 | -0.042 | 0.017 | -0.158 | -2.525 | 0.012 |
| | X3 | 0.024 | 0.070 | 0.022 | 0.345 | 0.730 |
| | X4 | -0.244 | 0.029 | -0.397 | -8.385 | 0.000 |
| | X5 | -0.014 | 0.006 | -0.111 | -2.377 | 0.018 |
| | X6 | -0.043 | 0.016 | -0.112 | -2.624 | 0.009 |
| | X7 | -0.105 | 0.062 | -0.144 | -1.709 | 0.089 |
| | X8 | -0.068 | 0.063 | -0.090 | -1.074 | 0.284 |
| | X9 | -0.016 | 0.015 | -0.042 | -1.042 | 0.298 |
| a. Dependent Variable: Trade value<br>R Square = 0.560<br>Adjusted R Square = 0.547<br>Durbin-Watson = 1.775<br>Sum of Squares = 5.268<br>F = 42.312<br>Sig = 0.000 | | | | | | |
| a. Dependent Variable: GPI | | | | | | |